ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ຄະນະກຳມະການ ບໍລິຫານ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ

ກອງຄຸ້ມຄອງ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ

ເລກທີ 0724/ກອຊ.ນທ

ນາກາຍ, ວັນທີ 01 MAR 2022

# ຂໍ້ຕົກລົງ

## ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງ ຈຸງານ ທ່ອງທ່ຽວທຳມະຊາດ

- ອີງຕາມ ກົດໝາຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການສ້າງຕັ້ງ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ສະບັບເລກທີ 36/ນຍ, ລົງວັນທີ 15 ກຸມພາ 2020;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງ ກະສິກຳ ແລະ ປ່າໄມ້ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງ ກອງຄຸ້ມຄອງ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ສະບັບເລກທີ: 0314/ກປ, ລົງວັນທີ 25 ກຸມພາ 2020.

ຫົວໜ້າ ກອງຄຸ້ມຄອງ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

### ມາດຕາ 1: ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດຫລັກການ, ມາດຕະການ ກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ, ແລະ ພັດທະນາແຫຼ່ງທ່ອງທ່ຽວໃນເຂດ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ໃຫ້ມີຄວາມເຂັ້ມແຂງ ແລະ ຄວາມຍືນຍົງ ແນໃສ່ພັດທະນາບັນດາທ່າແຮງ ຄວາມປົ່ມຊ້ອນທາງດ້ານທຳມະຊາດ, ປະຫວັດສາດ, ວັດທະນະທຳ, ຄຸນລັກ ສະນະພິເສດ ທາງດ້ານກາຍຍະພາບ ແລະ ຊີວະພາບໃນເຂດ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ, ເພື່ອປະກອບສ່ວນເຂົ້າໃນການສ້າງອາຊີບເສີມ, ເພີ່ມລາຍຮັບ, ພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ, ການຫລຸດຜ່ອນການທຳລາຍປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແລະ ສັດນ້ຳ-ສັດປ່າ.

### ມາດຕາ 2: ທີ່ຕັ້ງ ແລະ ພາລະບົດບາດ

ຈຸງານ ທ່ອງທ່ຽວທຳມະຊາດ ຂຽນເປັນຕົວອັກສອນຫຍໍ້ວ່າ "ໜທຊ", ໂດຍມີສຳນັກງານໃຫ່ຍ ຕັ້ງຢູ່ ບ້ານ ອຸດົມສຸກ ເມືອງ ນາກາຍ ແຂວງ ຄຳມ່ວນ. ແມ່ນໜ່ວຍງານໜຶ່ງທີ່ຢູ່ໃນພາຍໃຕ້ ການຊີ້ນຳ-ນຳພາ ທາງດ້ານວິຊາການ ຂອງ ກອຊ.ນທ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາປ່າໄມ້, ທີ່ດິນ

ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ໃຫ້ມີຄວາມຍືນຍົງ, ມີບົດບາດເປັນເສນາທິການໃຫ້ແກ່ການນຳ ຂອງ ກອງຄຸ້ມຄອງ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນໃນການພັດທະນາການທ່ອງທ່ຽວທຳມະຊາດໃຫ້ມີ ຄວາມເຂັ້ມແຂງ, ກ້າວໜ້າ, ຫລາກຫລາຍ ແລະ ເປັນທີ່ຍອມຮັບຂອງສັງຄົມທັງພາຍໃນ ແລະ ຕ່າງປະເທດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

### ມາດຕາ 3 ໜ້າທີ່

1. ປະຕິບັດກົດໝາຍ, ດຳລັດ, ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ແລະ ນິຕິກຳອື່ນໆ ຂອງຂັ້ນເທິງວາງອອກ;
2. ປະຕິບັດວຽກງານຕາມແຜນດຳເນີນງານປະຈຳປີ ຂອງ ກອຊທ ວາງອອກໃນແຕ່ລະໄລຍະໃຫ້ມີປະສິດທິຜົນສູງ;
3. ລົງສຳຫລວດ ແລະ ກຳນົດເຂດບູລິມະສິດສະເພາະການທ່ອງທ່ຽວ ເພື່ອສ້າງແຜນ ດຳເນີນງານການພັດທະນາການທ່ອງທ່ຽວໃນແຕ່ລະເຂດບູລິມະສິດໃຫ້ປະກົດຜົນເປັນຈິງ;
4. ເຜີຍແຜ່ລະບຽບ ແລະ ນິຕິກຳຕ່າງໆທີ່ກ່ຽວຂ້ອງກັບການທ່ອງທ່ຽວທຳມະຊາດ ແລະ ຂະບວນການລົງທຶນເພື່ອພັດທະນາທ່ອງທ່ຽວທຳມະຊາດ ໃນເຂດອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ;
5. ສະໜອງ ຂໍ້ມູນ-ຂ່າວສານດ້ານການທ່ອງທ່ຽວໃນເຂດ ກອຊ.ນທ ໃຫ້ສັງຄົມທັງພາຍໃນ ແລະ ຕ່າງປະເທດຮັບຮູ້ຢ່າງກວ້າງຂວາງ ເຊັ່ນ: ໂຄສະນາທາງໜັງສືພິມ, ວິທະຍຸ, ໂທລະທັດ, ຮູບພາບ ແລະ ລົງແວບໄຊອື່ນໆ;
6. ອຳນວຍຄວາມສະດວກທາງດ້ານເອກະສານ ໃນການຈັ້ງຕັ້ງປະຕິບັດ ກິດຈະການບໍລິການທ່ອງທ່ຽວ ໃນທົ່ວເຂດອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ;
7. ສະໜອງການຝຶກອົບຮົມເພື່ອສ້າງຄວາມອາດສາມາດດ້ານການບໍລິການທ່ອງທ່ຽວ, ຜູ້ນຳທ່ຽວ ແລະ ການອະນຸລັກແບບປະສົມປະສານ ກັບ ການພັດທະນາ ແລະ ພ້ອມທັງບັນດາຫົວຂໍ້ທີ່ຈຳເປັນຈາກການສະເໜີຂອງຜູ້ປະກອບການທ່ອງທ່ຽວ (ເຮືອນພັກ);
8. ປະສານສົມທົບ ແລະ ປຶກສາຫາລື ກັບພາກສ່ວນທີ່ກ່ຽວຂ້ອງ ໃນການກະກຽມ ແລະ ພັດທະນາຜະລິດຕະພັນທ່ອງທ່ຽວທຳມະຊາດ ໃນເຂດເປົ້າໝາຍ ໃຫ້ສອດຄ່ອງກັບແຜນພັດທະນາທ່ອງທ່ຽວ ເຂດອຸທິຍານແຫ່ງຊາດ ແລະ ລະບຽບການທີ່ ກ່ຽວຂ້ອງ;
9. ສຳຫຼວດ, ສ້າງແຜນການ, ພັດທະນາຜະລິດຕະພັນທ່ອງທ່ຽວ ແລະ ພັດທະນາພື້ນຖານໂຄງລ່າງຕາມຄວາມຄວາມ ເໝາະສົມໃນເຂດພັດທະນາການທ່ອງທ່ຽວ;

ນຫ

10. ລະດົມ ແລະ ສະໜອງທຶນຮອນສໍາລັບການພັດທະນາແຫຼ່ງທ່ອງທ່ຽວ ໃນເຂດອຸທິຍານແຫ່ງຊາດ ເປັນຕົ້ນ ການກໍ່ສ້າງພື້ນຖານໂຄງລ່າງທີ່ຈໍາເປັນ ເພື່ອອໍານວຍຄວາມສະດວກໃຫ້ແກ່ການ ທ່ອງທ່ຽວໃນເຂດເປົ້າໝາຍພັດທະນາ;
11. ອະນຸຍາດ ແລະ ຄວບຄຸມ ການພັດທະນາຜະລິດຕະພັນທ່ອງທ່ຽວ ແລະ ການເຂົ້າ-ອອກ ຂອງນັກທ່ອງທ່ຽວ ໃນເຂດອຸທິຍານແຫ່ງຊາດ ນາກາຍ-ນໍ້າເທີນ;
12. ພົວພັນ ແລະ ຮ່ວມມື ກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານ ອຸທິຍານແຫ່ງຊາດ ນາກາຍ-ນໍ້າເທີນ ຕາມກົດໝາຍ ແລະ ຕາມການມອບໝາຍ;
13. ໃຫ້ຄວາມຊ່ວຍເຫຼືອແກ່ນັກທ່ອງທ່ຽວ ແລະ ຜູ້ປະກອບການ ໃນກໍລະນີສຸກເສີນ;
14. ຕິດຕາມກວດກາການຈັດຕັ້ງປະຕິບັດກິດຈະກໍາທ່ອງທ່ຽວ, ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ຂອບເຂດນໍາໃຊ້ ອຸທິຍານແຫ່ງຊາດ ນາກາຍ-ນໍ້າເທີນ ເພື່ອການທ່ອງທ່ຽວ;
15. ສ້າງສາລະຄະດີດ້ານການທ່ອງທ່ຽວພາຍໃນເຂດ ກອຊ.ນທ ໃຫ້ໄດ້ອອກໄປເຜີຍແຜ່ຢ່າງກວ້າງຂວາງ;
16. ປະສານກັບຂະແໜງການທ່ອງທ່ຽວທັງພາກລັດ ແລະ ເອກະຊົນ ໃນຂັ້ນສູນກາງ ແລະ ທ້ອງຖິ່ນເພື່ອຊອກຫາ ແລະ ລະດົມນັກທ່ອງທ່ຽວເຂົ້າມາທ່ຽວໃນເຂດ ກອຊ.ນທ ໃຫ້ຫລາຍຂຶ້ນ;
17. ຄົ້ນຄ້ວາ ແລະ ຂຶ້ນແຜນຈັດຫາສິ່ງອໍານວຍຄວາມສະດວກ ດ້ານການທ່ອງທ່ຽວໃຫ້ພຽງພໍກັບຄວາມຕ້ອງການ ຂອງ ຜູ້ມາທ່ຽວຊົມ;
18. ສ້າງກິດຈະກໍາການທ່ອງທ່ຽວທາງບົກ, ທາງນໍ້າ, ທາງອາກາດ;
19. ກໍານົດຄ່າບໍລິການດ້ານການທ່ອງທ່ຽວແຕ່ລະປະເພດອອກເພື່ອໃຫ້ຫົວໜ້າ ແລະ ຄະນະກອງເຊັນຮັບຮອງ ແລະ ປະກາດໃຊ້ ຕົວຢ່າງ: ຄ່າບໍລິການຜູ້ນໍາພາທ່ຽວ, ຂີ່ເຮືອ, ເບິ່ງສັດປ່າ, ເຊົ່າອຸປະກອນການທ່ອງທ່ຽວ ແລະ ອື່ນໆ;
20. ຈັດຫາເຄື່ອງມືທາງການແພດ ເພື່ອເປັນການຊ່ວຍເຫຼືອປະຖົມພະຍາບານ ເບື້ອງຕົ້ນໃຫ້ແກ່ນັກທ່ອງທ່ຽວ ໃຫ້ມີຄວາມປອດໄພໃນເວລາ ທ່ອງທ່ຽວອຸທິຍານແຫ່ງຊາດ ນາກາຍ-ນໍ້າເທີນ.
21. ຄົ້ນຄ້ວາການເຊົ່າ, ສໍາປະທານ ຫຼື ໂຈະການເຊົ່າສໍາປະທານໃຫ້ແກ່ຫົວໜ້າ ແລະ ຄະນະກອງພິຈາລະນາ;
22. ອອກແບບ ແລະ ຜະລິດປີ້ເຂົ້າທ່ຽວຊົມອຸທິຍານແຫ່ງຊາດ;
23. ສະຫລຸບງານປະຈໍາອາທິດ, ປະຈໍາເດືອນ, ສາມເດືອນ, ຫົກເດືອນ, ເກົ້າເດືອນ ແລະ ໜຶ່ງປີໃຫ້ແກ່ການນໍາ ກອຊ.ນທ ຊາບຢ່າງເປັນປົກກະຕິ;
24. ປະຕິບັດວຽກງານອື່ນໆຕາມການມອບໝາຍ ຂອງ ການນໍາ ກອຊ.ນທ.

ມາດຕາ 4. ຂອບເຂດສິດ

1. ສະເໜີຕໍ່ຫົວໜ້າ ແລະ ຄະນະ ກອຊ.ນທ ກ່ຽວກັບການປັບປຸງການຈັດຕັ້ງ ຂອງຕົນເຊັ່ນ: ການກໍານົດຕໍາແໜ່ງງານ, ການບັນຈຸຊັບຊ້ອນ ແລະ ການຈັດວາງບຸກຄະລະກອນພາຍໃນໜ່ວຍງານຂອງຕົນ;

2. ສະເໜີປະຕິບັດນະໂຍບາຍ ເລື່ອນຊັ້ນ-ເລື່ອນຂັ້ນເງິນເດືອນ, ຍ້ອງຍໍ ແລະ ປະຕິບັດວິໄນຕໍ່ພະນັກງານລັດຖະກອນທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
3. ຕິດຕໍ່ພົວພັນປະສານງານກັບອຳນາດການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອໄກ່ເກ່ຍ ແລະ ແກ້ໄຂປະກົດການຍໍ້ທໍ້ທີ່ເກີດຂຶ້ນພາຍໃນຄວາມຮັບຜິດຊອບຂອງຕົນ;
4. ພົວພັນ, ປະສານສົມທົບ ແລະ ແລກປ່ຽນ ຂໍ້ມູນ-ຂ່າວສານກັບພາກສ່ວນທີ່ກ່ຽວຂ້ອງກັບວຽກງານຂອງຕົນ;
5. ຈັດຕັ້ງ ແລະ ຮຽກໂຮມພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເຂົ້າຮ່ວມກອງປະຊຸມ ຫຼື ລາຍງານວຽກແຕ່ລະໄລຍະ, ເຂົ້າຮ່ວມການວາງສະແດງ, ເຂົ້າຮ່ວມສຳມະນາ, ຝຶກອົບຮົມ, ເຂົ້າຮ່ວມທັດສະນະສຶກສາໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ທັງພາຍໃນ ແລະ ຕ່າງປະເທດ ຕາມການແຕ່ງຕັ້ງ ຫຼື ມອບໝາຍ ຂອງ ກອຊ.ນທ;
6. ຄົ້ນຄ້ວານຳສະເໜີທັດສະນະທາງດ້ານວິຊາການທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ແກ່ ກອຊ.ນທ ມີຄຳເຫັນ ແລະ ພິຈາລະນາ;
7. ປະຕິບັດສິດອື່ນຕາມການມອບໝາຍ ຂອງ ຂັ້ນເທິງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5. ໂຄງປະກອບການຈັດຕັ້ງ**

1. ໜ່ວຍທ່ອງທ່ຽວທຳມະຊາດ

**ມາດຕາ 6. ໂຄງປະກອບບຸກຄະລະກອນ**

1. ຫົວໜ້າຈຸງານ ທ່ອງທ່ຽວທຳມະຊາດ (1)

## ໝວດທີ 4
## ໜ້າທີ່ ຂອງ ຫົວໜ້າຈຸງານທ່ອງທ່ຽວທຳມະຊາດ

**ມາດຕາ 7. ໜ້າທີ່ຂອງຫົວໜ້າຈຸງານ ທ່ອງທ່ຽວທຳມະຊາດ.**

1. ສ້າງແຜນຄຸ້ມຄອງ ການທ່ອງທ່ຽວເຂດອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ໃນຂອບເຂດທີ່ມີກລິງທຶນສຳປະ ທານ;
2. ສ້າງຂະບວນການດຳເນີນເອກະສານໃນການລົງທຶນ ພັດທະນາແຫຼ່ງທ່ອງທ່ຽວ ເຂດອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ;
3. ກຳນົດເງື່ອນໄຂ ຫຼື ມາດຕະຖານ ໃນການລົງທຶນພັດທະນາແຫຼ່ງທ່ອງທ່ຽວ ເຂດອຸທິຍານແຫ່ງຊາດ,

4. ຮ່າງບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການພັດທະນາແຫຼ່ງທ່ອງທ່ຽວ ໃນເບື້ອງຕົ້ນ ແລະ ກ້າວໄປສູ່ຂະບວນການສຳປະທານ ແຫຼ່ງທ່ອງທ່ຽວ;
5. ກະກຽມອຸປະກອນ ແລະ ສິ່ງອຳນວຍຄວາມສະດວກ ໃນການປະຊຸມກັບຄູ່ຮ່ວມງານ ແລະ ນັກລົງທຶນ;
6. ຕິດຕາມກວດກາ ແລະ ປະເມີນ ການຈັດຕັ້ງປະຕິບັດກິດຈະກຳທ່ອງທ່ຽວ ຂອງນັກລົງທຶນ ທີ່ໄດ້ກຳນົດໄວ້ໃນແຜນການຄຸ້ມຄອງ ການທ່ອງທ່ຽວ;
7. ເປັນຕົວແທນໃຫ້ແກ່ວຽກງານທ່ອງທ່ຽວ ກອຊ.ນທ ໃນການສະເໜີແນວຄວາມຄິດ ໃນກິດຈະກຳທີ່ຈະສົ່ງຜົນທາງລົບ ຫຼື ເປັນໄພຂົ່ມຂູ່ ຕໍ່ສັດປ່າ ແລະ ຊີວະນາໆພັນ ຂອງອຸທິຍານ;
8. ສ້າງແຜນການທ່ອງທ່ຽວ ເພື່ອນຳສະເໜີຕໍ່ນັກລົງທຶນ ທີ່ມີປະສົບການ ແລະ ມີທ່າແຮງດ້ານການລົງທຶນ;
9. ນຳພານັກລົງທຶນລົງຢ້ຽມຢາມສະໜາມຕົວຈິງ ເພື່ອເປັນແນວທາງ ແລະ ເປັນສິ່ງກະຕຸ້ນໃຫ້ນັກລົງທຶນສົນໃຈລົງທຶນ;
10. ສ້າງເອກະສານ ເພື່ອໂຄສະນາເປີດກວ້າງ ໃນການລົງທຶນພັດທະນາແຫຼ່ງທ່ອງທ່ຽວ ເຂດອຸທິຍານແຫ່ງຊາດ, ປະຊາສຳພັນກ່ຽວກັບການທ່ອງທ່ຽວ;
11. ຂຽນບົດລາຍງານຄວາມຄືບໜ້າ ທັງພາສາລາວ ແລະ ພາສາອັງກິດ, ປະສານງານກັບຄູ່ຮ່ວມງານ, ຕິດຕາມຄວາມຄືບໜ້າຂອງໜ້າວຽກແຕ່ລະໄລຍະຕາມແຜນວຽກ ຂອງ ກອຊ.ນທ ;
12. ສ້າງແຜນງົບປະມານ ແລະ ສະຫຼຸບລາຍງານ ປະຈຳເດືອນ, ປະຈຳໄຕມາດ ແລະ ປະຈຳປີ (Annual Budget Plan) ແລະ ແຜນກິດຈະກຳລະອຽດ (Narrative Report) ຂອງວຽກງານທ່ອງທ່ຽວໃນແຕ່ລະກິດຈະກຳ ທີ່ໄດ້ກຳນົດໄວ້ໃນແຜນ 5 ປີ;
13. ສ້າງແຜນວຽກປະຈຳເດືອນ (Monthly Workplan), ອັບເດດຂໍ້ມູນເວບໄຊເລື່ອງການທ່ອງທ່ຽວ;
14. ເຂົ້າຮ່ວມເປັນກຳມະການຈັດຊື້-ຈັດຈ້າງ ເມື່ອມີການກໍ່ສ້າງ ແລະ ການຈັດຊື້ໃນວົງເງິນສູງ.
15. ເຮັດວຽກກັບຄູ່ຮ່ວມງານເຊັ່ນ: ຫ້ອງການຖະແຫຼງຂ່າວ-ວັດທະນາທຳ ແລະ ທ່ອງທ່ຽວ ເມືອງ ນາກາຍ ແລະ ຫ້ອງວ່າການ ເມືອງ ນາກາຍ, ບ້ານ ທີ່ນອນຢູ່ໃນແຫຼ່ງທ່ອງທ່ຽວເຊັ່ນ: ບ້ານ ນາຫາວ, ບ້ານ ນາວາງ ແລະ ອື່ນໆ;
16. ກວດກາ,ຕິດຕາມ ແລະ ຮັກສາຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວທີ່ເຂົ້າມາທ່ຽວໃນເຂດອຸທິຍານແຫ່ງຊາດ;
17. ປະຊາສຳພັນ ກ່ຽວກັບການຮັກສາ ແລະ ເກັບມຽ້ນຂີ້ເຫຍື້ອ ແລະ ການກຳຈັດຂີ້ເຫຍື້ອຢ່າງມີປະສິດທິຜົນ;
18. ຕິດຕາມ ແລະ ລາຍງານ ກ່ຽວກັບການເກັບລາຍຮັບຈາກການຂາຍປີ້ເຂົ້າອຸທິຍານ ແລະ ລາຍຮັບອື່ນໆ ເພື່ອນຳມາແບ່ງປັນຜົນປະໂຫຍດຕາມລະບຽບທ່ອງທ່ຽວທີ່ໄດ້ກຳນົດໄວ້;
19. ກວດກາຕິດຕາມ, ປະເມີນຜົນ ວຽກງານທ່ອງທ່ຽວໃນແຕ່ລະໄລຍະທີ່ມີຜົນກະທົບທາງດ້ານບວກ ແລະ ດ້ານລົບຕໍ່ການທ່ອງທ່ຽວໃນເຂດອຸທິຍານແຫ່ງຊາດນາກາຍ-ນ້ຳເທີນ;
20. ບໍລິຫານ, ຈັດການ, ຄຸ້ມຄອງ ແລະ ຕິດຕາມແຜນກິດຈະກຳ, ແຜນງົບປະມານ ແລະ ການຈ່າຍງົບປະມານໃຫ້ມີປະສິດຕິຜົນ ແລະ ປະສິດຕິພາບ.

21. ປະຕິບັດວຽກງານອື່ນໆຕາມການແຕ່ງຕັ້ງ ຫຼື ມອບໝາຍຄະນະກອງ ແລະ ຫົວໜ້າກອງຄຸ້ມຄອງ ອຸທິຍານ ແຫ່ງຊາດ ນາກາຍ-ນ້ຳເທີນ.

### ໝວດທີ 5

### ຫລັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 8. ຫລັກການ**

1. ປະຕິບັດຫລັກການລວມສູນປະຊາທິປະໄຕ, ຕີກລົງເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ ກຽ່ວກັບ ບັນຫາ ລວມ ຂອງ ໜ່ວຍງານທ່ອງທຽ່ວ ທຳມະຊາດ;
2. ປະຕິບັດລະບອບຫົວໜ້າດຽວ ຕາມລະບົບການແບ່ງຂັ້ນຄຸ້ມຄອງ ບົນພື້ນຖານການແບ່ງງານໃຫ້ບຸກຄົນ ຢ່າງຈະ ແຈ້ງ ແລະ ສິດໃນການຕັດສິນບັນຫາໃນຂອບເຂດຄວາມຮັບຜິດຊອບຂອງຕົນ ພ້ອມທັງເສີມ ຂະຫຍາຍຫົວຄິດປະດິດສ້າງ ຂອງ ພະ ນັກງານລັດຖະກອນທຸກລະດັບ, ນຳໃຊ້ຄວາມຮູ້ຄວາມສາມາດ ຂອງຕົນຢ່າງສຸດຂີດ ເພື່ອເຮັດລ້ອນໜ້າທີ່ວຽກງານທີ່ຕົນໄດ້ຮັບມອບໝາຍ, ເຄົາລົບ ແລະ ປະຕິບັດກົດ ໝາຍ, ລະບຽບການຢ່າງເຂັ້ມງວດ;
3. ທຸກການເຄື່ອນໄຫວ ຂອງໜ່ວຍງານ ທ່ອງທຽ່ວທຳມະຊາດ ແມ່ນໃຫ້ປະຕິບັດຕາມລະບຽບການ, ຫລັກການ ແລະ ແຜນດຳເນີນງານປະຈຳປີ, 5 ປີ ຂອງ ກອຊ.ນທ ຢ່າງເຂັ້ມງວດ.

**ມາດຕາ 9. ແບບແຜນວິທີເຮັດວຽກ**

1. ເຮັດວຽກມີແຜນການ, ແຜນງານລະອຽດ, ແກ້ໄຂວຽກຢ່າງມີຈຸດສຸມ ແລະ ເປົ້າໝາຍໃນແຕ່ລະໄລຍະ ປະສານກັບຂະແໜງການອື່ນໆທີ່ກຽ່ວຂ້ອງທັງສູນກາງ ແລະ ທ້ອງຖິ່ນຢ່າງແໜ້ນແຟ້ນ ແນ່ໃສ່ໝູນໃຊ້ກຳ ລັງແຮງສັງລວມ ຂອງ ທຸກພາກສ່ວນ ເພື່ອພັດທະນາວຽກປັບປຸງຊີວິດການເປັນຢູ່ໃຫ້ມີຄວາມສົມບູນ ແລະ ຮັ່ງມີຂື້ນ ຕິດພັນກັບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາເຂດອຸທິຍານແຫ່ງຊາດ ນາກາຍ-ນ້ຳ ເທີນໃຫ້ມີຄວາມຍືນຍົງທາງດ້ານຊັບພະຍາ ກອນປ່າໄມ້ ແລະ ສັດນ້ຳ-ສັດປ່າ ຕາມທິດສີຂຽວທີ່ໄດ້ກຳ ນົດໄວ້;
2. ຫົວໜ້າໜ່ວຍງານມີຄວາມຮັບຜິດຊອບໂດຍກົງຕໍ່ການນຳ ຂອງ ກອຊ.ນທ ກຽ່ວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງ ຂອງ ຕົນ;
3. ຫົວໜ້າໜ່ວຍງານເປັນຜູ້ມີຄຳເຫັນຕໍ່ບັນດາເອກະສານທັງຫມົດ ແລະ ລົງລາຍເຊັນຕໍ່ເອກະສານສຳຄັນ, ກໍລະນີຕິດຂັດ ຫຼື ໄປເຄື່ອນໄຫວວຽກງານທາງລັດຖະການ ຕ້ອງມອບສິດຊົ່ວຄາວໃຫ້ແກ່ພາກສ່ວນໃດ ສ່ວນນື່ງຮັກສາການແທນ, ເວລາຫົວໜ້າໜ່ວຍງານມາປະຈຳການແລ້ວ ຜູ້ຮັກສາການແທນ ຕ້ອງລາຍ ງານວຽກທີ່ຕົນໄດ້ແກ້ໄຂ ແລະ ວຽກຄ້າງຄາໃຫ້ຫົວໜ້າໜ່ວຍງານຊາບພາຍໃນ 1 ວັນທາງລັດຖະການ;
4. ພົວພັນ ແລະ ສົມທົບກັບພາກສ່ວນທີ່ກຽ່ວຂ້ອງເພື່ອຈັດຕັ້ງປະຕິບັດວຽກງານໃຫ້ສຳເລັດຜົນຕາມເປົ້າໝ າຍທີ່ໄດ້ກຳນົດໄວ້;
5. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫລຸບ ແລະ ຖອດຖອນບົດຮຽນ, ຕີລາຄາຜົນໄດ້ຮັບ ແລະ ຜົນເສຍຫາຍ ພ້ອມທັງປະຕິບັດລະບອບລາຍງານ ສ່ອງແສງຢ່າງເຂັ້ມງວດ;

ໜ

6. ປະຕິບັດລະບອບປະຊຸມ, ສອງແສງ, ລາຍງານປະຈຳອາທິດ, ປະຈຳ 3ເດືອນ, 6ເດືອນ, 9ເດືອນ ແລະ ປະຈຳປີ ຫຼື ກອງປະຊຸມວິຊາການຢ່າງເຂັ້ມງວດ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

### ມາດຕາ 10. ງົບປະມານ, ເຄື່ອງແບບ, ຕາປະທັບ

ແມ່ນນຳໃຊ້ງົບປະມານ, ເຄື່ອງແບບ ແລະ ກາປະທັບ ຂອງ ກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ເຂົ້າ ໃນການເຄື່ອນໄຫວວຽກງານ ທາງລັດຖະການຕາມລະບຽບທີ່ໄດ້ກຳນົດໄວ້.

### ມາດຕາ 11. ການຈັດຕັ້ງປະຕິບັດ

ມອບໃຫ້ຈຸງານ ທ່ອງທ່ຽວທຳມະຊາດ ນຳພັນຂະຫາຍ ແລະ ຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ.

### ມາດຕາ 12. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າ ກອງຄຸ້ມຄອງ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ

ບ່ອນສົ່ງ:

- ຄະນະ ກອຊ. ນທ ເພື່ອຊາບ 1 ສະບັບ
- ຫົວໜ້າຈຸງານ ແລະ ຫ້ອງການເຂດ, ສາຂາ 1 ສະບັບ
- ພະນັກງານພາຍໃນໜ່ວຍງານ 1 ສະບັບ
- ເກັບມ້ຽນ 1 ສະບັບ

(ກອງຄຸ້ມຄອງ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ — ຄະນະກຳມະການບໍລິຫານ)

ອຸໄທ ວົງສາ